

# ເກມຄົນຖືພາ

ນັກຮຽນ 6-10 ຄົນ

15 ນາທີ

ພື້ນທີ່ໂລ່ງ

## ເກມນີ້ແມ່ນຫຍັງ?

ເກມຄົນຖືພາແມ່ນໜຶ່ງໃນເກມສ້າງບັນຍາກາດ ຂອງການເຮັດກິດຈະກໍາລະຫວ່າງເພື່ອນສອນເພື່ອນ ແລະ ນັກຮຽນ, ໂດຍທີ່ນັກຮຽນແຕ່ລະຄົນຈະໄດ້ຮັບປຸມເປົ້າຄົນລະໜ່ວຍ, ເພື່ອເປົ່າແລ້ວຍັດໃສ່ທ້ອງຂອງຕົນເອງ. ແຕ່ລະຄົນຕ້ອງສວມບົດເປັນຜູ້ຍິງຖືພາທີ່ປົກປ້ອງລູກຂອງຕົນ ແຕ່ໃນຂະນະດຽວກັນກໍພະຍາຍາມທໍາລາຍປຸມເປົ້າຂອງຄົນອື່ນ, ຄົນທີ່ຮັກສາປຸມເປົ້າໄວ້ໄດ້ເປັນຄົນສຸດທ້າຍເປັນຜູ້ຊະນະໃນເກມນີ້.

## ເກມນີ້ສ້າງມາເພື່ອຫຍັງ?

ເກມຖືພາເປັນເກມທີ່ນອນໃນຫົວຂໍ້ການຖືພາກ່ອນໄວອັນຄວນ, ນັກຮຽນທັງຍິງ - ຊາຍ ຈະໄດ້ທົດລອງຖືພາໝາກປຸມເປົ້າເພື່ອໃຫ້ເຂົ້າໃຈໃນບາງພາກສ່ວນຂອງການຖືພາວ່າເປັນແນວໃດ. ເພື່ອນສອນເພື່ອນ ຈະພານັກຮຽນຫຼິ້ນເກມນີ້ເພື່ອສ້າງບັນຍາກາດ ແລະ ລະລາຍພຶດຕິກໍາກ່ອນນໍານັກຮຽນເຂົ້າສູ່ຫົວຂໍ້ການຮຽນ-ການສົນທະນາພາຍຫຼັງຫຼິ້ນເກມຈົບລົງ.

- ປຸມເປົ້າ

https://youtu.be/bC-rkZ1_8R0

# ກິດຈະກຳນີ້ດຳເນີນແນວໃດ?

1. ເພື່ອນສອນເພື່ອນກຽມບົດຮຽນໃນຫົວຂໍ້ການຖືພາກ່ອນໄວອັນຄວນ ເພື່ອໃຊ້ໃນການສົນທະນາຫຼັງຈາກຈົບເກມ (ຄູຝຶກສາມາດເບິ່ງຂໍ້ມູນກ່ຽວກັບການຖືພາກ່ອນໄວອັນຄວນໄດ້ທີ່ບັດຂໍ້ມູນ)

2. ວິທີການຫຼິ້ນເກມແມ່ນຂໍອາສາສະໝັກຈາກນັກຮຽນທັງໝົດອອກມາຫຼິ້ນເກມ, ຫຼາຍສຸດແມ່ນໄດ້ 10 ຄົນເພື່ອຕາງໜ້າໝູ່ໃນການຫຼິ້ນເກມ.

3. ເພື່ອນສອນເພື່ອນ ແຈກຢາຍໝາກປຸມເປົ້າໃຫ້ນັກຮຽນເປົ່າ ແລ້ວຍັດໃສ່ໃນເສື້ອຂອງຕົນ, ຂະໜາດຂອງປຸມເປົ້າແມ່ນໃຫ້ພໍດີຍັດໃສ່ເສື້ອໄດ້ບໍ່ໃຫ້ໃຫຍ່ ຫຼື ນ້ອຍເກີນໄປ.

4. ເມື່ອທຸກຄົນກຽມປຸມເປົ້າພ້ອມແລ້ວ, ເພື່ອນສອນເພື່ອນ ນັບ 1 2 3 ເພື່ອໃຫ້ສັນຍານ.





5. ຫຼັງຈາກນັ້ນຜູ້ຫຼິ້ນຕ້ອງສວມບົດເປັນແມ່ມານທີ່ຈະຕ້ອງຮັກສາລູກຂອງຕົນເອງໄວ້ (ບໍ່ໃຫ້ປຸມເປົ້າແຕກ), ໃນຂະນະດຽວກັນກໍຕ້ອງທຳລາຍປຸມເປົ້າຂອງຄົນອື່ນໃຫ້ແຕກ, ຄົນທີ່ສາມາດຮັກສາລູກປຸມເປົ້າໄວ້ເປັນຄົນສຸດທ້າຍໄດ້ເປັນຜູ້ຊະນະ.

6. ຫຼັງຈາກຈົບເກມຄູຝຶກຖາມນັກຮຽນວ່າ ຮູ້ສຶກແນວໃດກັບການຫຼິ້ນເກມນີ້? ແລ້ວໂຍງເຂົ້າບົດຮຽນທີ່ກຽມມາ
ຕົວຢ່າງ: ນັກຮຽນຮູ້ສຶກແນວໃດເວລາທີ່ມີປຸມເປົ້າຢູ່ໃນທ້ອງ?, ມີຄວາມຫຍຸ້ງຍາກແນວໃດ?, ເປັນຫຍັງເຮົາຕ້ອງຮັກສາປຸມເປົ້າໃນທ້ອງເຮົາໄວ້?



**ໝາຍເຫດ:**

ລະຫວ່າງການຫຼິ້ນເກມໃຫ້ຄູຝຶກເອົາໃຈໃສ່ ລະມັດລະວັງຄວາມປອດໄພເປັນພິເສດ ເພາະການຫຼິ້ນເກມຕ້ອງໄດ້ມີການເໜັງຕີງຫຼາຍ. ກວດຄືນວ່າສະຖານທີ່ເໝາະສົມ ຫຼື ບໍ່? ເຕືອນນັກຮຽນກ່ອນຫຼິ້ນວ່າເປັນເກມເພື່ອຄວາມມ່ວນຊື່ນ ແລະ ລະມັດລະວັງການໄດ້ຮັບບາດເຈັບ.

With support from Finland's development cooperation